# ຂະບວນການສ້າງກິດຈະກຳກິລາ ເພື່ອຂ່ຳນັບຮັບຕ້ອນ ວັນທັນເປັນທຸລະກິດຂອງ ທຄຕລ ຄົບຮອບ 27 ປີ

## ( 01/11/1989 - 01/11/2016 )

ການຈັດກິດຈະກຳກິລາຕ້ອນຮັບວັນທັນເປັນທຸລະກິດຂອງ ທຄຕລ ຄົບຮອບ 27 ປີ ໄດ້ຖືກຈັດຂຶ້ນທີ່ເດີ່ນກິລາ ກູດໄລຟ໌ ( Good life ) ໃນວັນເສົາທີ **17/09/2016** ໄດ້ມີທີມເຂົ້າແຂ່ງຂັນຮອບຄັດເລືອກທັງໝົດ 12 ທີມ, ໃນນັ້ນ ມີທີມເຕະບານຈາກບໍລິສັດໃນເຄືອ **5** ທີມຄື: ທະນາຄານ ລາວ-ຝຣັ່ງ, ທະນາຄານ ລາວ-ຈີນ, ທະນາຄານ ລາວ-ຫວຽດ, ບໍລິສັດປະກັນໄພລາວ-ຫວຽດ ແລະ ບໍລິສັດຫຼັກຊັບ BCEL-KT.  ການແຂ່ງຂັນໄດ້ດຳເນີນມາຮອດຮອບທີ 2 ໃນວັນເສົາທີ **24/09/2016** ສາມາດຄັດຈ້ອນໄດ້ 4 ທີມສຸດທ້າຍໄດ້ແກ່: ທີມຈາກທະນາຄານ ລາວ-ຝຣັ່ງ **ພົບກັບ** ທີມສູນບໍລິການ + ພະແນກຄຸ້ມຄອງສິນເຊື່ອ ແລະ ທີມຈາກບໍລິສັດປະກັນໄພ ລາວ-ຫວຽດ **ພົບກັບ** ທີມສູນບັດ + ພະແນກບັນຊີສັງລວມ + ບໍລິຫານທຶນ. ຮອບຮອງຊະນະເລີດຈະໄດ້ຈັດຂຶ້ນໃນວັນທີ **15/10/2016** ເພື່ອຄັດເລືອກເອົາສອງທີມສຸດທ້າຍ ແລະ ຮອບ ຊີງຊະນະເລີດຈະໄດ້ຈັດຂຶ້ນໃນວັນທີ **29/10/2016** ທີ່ຈະມາຮອດນີ້.





**ບໍລິສັດປະກັນໄພ ລາວ-ຫວຽດ**

**VS**

**ທີມສູນບັດ + ພະແນກບັນຊີສັງລວມ + ບໍລິຫານທຶນ**

**ທະນາຄານ ລາວ-ຝຣັ່ງ**

**VS**

**ທີມສູນບໍລິການ + ພະແນກຄຸ້ມຄອງສິນເຊື່ອ**





ໃນຂະນະດຽວກັນ ວັນທີ **01/10/2016** ເວລາ 8:00 ໂມງ, ທີ່ເດີ່ນສະໂມສອນຕີດອກປີກໄກ່ຫຼັກ 5 ໄດ້ມີການແຂ່ງຂັນ **ກິລາຕີດອກປີກໄກ່ ເພື່ອຂໍ່ານັບຮັບຕ້ອນວັນຫັນເປັນທຸລະກິດຂອງ ທຄຕລ ຄົບຮອບ 27 ປີ,** ການແຂ່ງຂັນ ແບ່ງອອກເປັນ 2 ປະເພດຄື: ກິລາຕີດອກປີກໄກ່ປະເພດຊາຍຄູ່ ແລະ ປະເພດຍິງຄູ່. ໃນນັ້ນແຕ່ລະປະເພດຂອງ ຄູ່ຊາຍ ແລະ ຄູ່ຍິງ ມີທີມກິລາຈາກ ທຄຕລ 12 ທີມ ແລະ ບໍລິສັດໃນເຄືອ 4 ທີມຄື: ທະນາຄານ ລາວ-ຈີນ, ທະນາຄານ ລາວ-ຫວຽດ, ບໍລິສັດປະກັນໄພລາວ-ຫວຽດ ແລະ ບໍລິສັດຫຼັກຊັບ BCEL-KT. ການແຂ່ງຂັນໄດ້ດໍາເນີນໄປຢ່າງດຸເດືອດ ແລະ ມີບັນຍາກາດ ທີ່ຟົດຟື້ນຈາກກອງເຊຍຂອງແຕ່ລະພາກສ່ວນ, ການແຂ່ງຂັນມີທັງໝົດ 3 ຮອບເພື່ອຄັດເລືອກເອົາສອງທີມສຸດທ້າຍຂອງແຕ່ລະປະເພດຊາຍຄູ່ ແລະ ຍິງຄູ່, ເຊິ່ງຜົນຂອງການແຂ່ງຂັນມີດັ່ງນີ້:

- **ປະເພດຊາຍຄູ່**
    - ອັນດັບ 1: ທີມພະແນກ ຄັງສາງ
    - ອັນດັບ 2: ທີມບໍລິສັດປະກັນໄພ ລາວ - ຫວຽດ
    - ອັນດັບ 3 ຮ່ວມ: ທີມພະແນກ ຄັງສາງ + ໄອທີ ຮ່ວມກັບ ທີມສາຂາ ນະຄອນຫຼວງ
- **ປະເພດຍິງຄູ່**
    - ອັນດັບ 1: ທີມພະແນກ ຄັງສາງ + ໄອທີ
    - ອັນດັບ 2:ທີມທະນາຄານຮ່ວມທຸລະກິດ ລາວ - ຫວຽດ
    - ອັນດັບ 3 ຮ່ວມ: ທີມພະແນກ ບໍລິການພະແນກລູກຄ້າລາຍໃຫຍ່ ຮ່ວມກັບ ທີມບໍລິສັດປະກັນໄພ ລາວ - ຫວຽດ









**ພາບ ແລະ ຂຽນໂດຍ: ທ້າວ ສຸລິຍົງ ສຸກຈັນດີ**